TRIS RATING

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

28 ພຶດສະພາ 2025

ລະດັບຄວາມໜ້າເຊື່ອຖືຂອງບໍລິສັດ:	**BB+**
ລະດັບຄວາມໜ້າເຊື່ອຖືຂອງຮຸ້ນກູ້ບໍ່ດ້ອຍສິດ ແລະ ບໍ່ມີຫລັກປະກັນ:	**BB+**
ແນວໂນ້ມລະດັບຄວາມໜ້າເຊື່ອຖື:	**ຄົງທີ່ (Stable)**

ເຫດຜົນ

TRIS Rating ຢັ້ງຢືນລະດັບຄວາມໜ້າເຊື່ອຖື ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ແລະ ຂອງຮຸ້ນກູ້ ຜ-ຟຟລ ປະເພດບໍ່ດ້ອຍສິດແລະບໍ່ມີຫລັກປະກັນ ທີ່ລະດັບ “BB+”. ພ້ອມກັນນີ້, ພວກເຮົາໄດ້ປັບແນວໂນ້ມຂອງລະດັບຄວາມໜ້າເຊື່ອຖືຂອງ ຜ-ຟຟລ ເປັນ “Stable” ຫຼື “ຄົງທີ່” ຈາກ “Negative” ຫຼື “ລົບ” ໄປຕາມການປັບແນວໂນ້ມລະດັບຄວາມໜ້າເຊື່ອຖືຂອງປະເທດ ສປປ ລາວ. TRIS Rating ປັບແນວໂນ້ມລະດັບຄວາມໜ້າເຊື່ອຖືຂອງປະເທດລາວ ມາເປັນ “Stable” ຫຼື “ຄົງທີ່” ຈາກ “Negative” ຫຼື “ລົບ” ໃນຂະນະດຽວກັນກໍຢັ້ງຢືນ ລະດັບຄວາມໜ້າເຊື່ອຖືຂອງປະເທດລາວ ທີ່ “BB+” ໃນວັນທີ 27 ພຶດສະພາ 2026.

ລະດັບຄວາມໜ້າເຊື່ອຖື ຜ-ຟຟລ ເທົ່າກັບ ລະດັບຄວາມໜ້າເຊື່ອຖືຂອງ ລັດວິສາຫະກິດໄຟຟ້າລາວ (ຟຟລ) (ໂດຍ ລະດັບຄວາມໜ້າເຊື່ອຖືຂອງ ຟຟລ ທີ່ລະດັບ “BB+” ແນວໂນ້ມລະດັບຄວາມໜ້າເຊື່ອຖື ”ຄົງທີ່” ຫຼື ”Stable” *) ແລະ ລະດັບຄວາມໜ້າເຊື່ອຖືຂອງປະເທດ ສປປ ລາວ (ໂດຍທີ່ລະດັບຄວາມໜ້າເຊື່ອຖືຢູ່ທີ່ BB+ ແນວໂນ້ມລະດັບຄວາມໜ້າເຊື່ອຖື ”ຄົງທີ່” ຫຼື ”Stable”) ເຊິ່ງສະທ້ອນເຖິງສະຖານະຂອງ ຜ-ຟຟລ ທີ່ເປັນບໍລິສັດລູກຫຼັກຂອງ ລັດວິສາຫະກິດໄຟຟ້າລາວ (ຟຟລ) ລວມ ເຖິງ ສະຖານະທີ່ເປັນລັດວິສາຫະກິດຂອງ ສປປ ລາວ ແລະ ມີບົດບາດທີ່ສຳຄັນຢ່າງຍິ່ງໃນການຜະລິດພະລັງງານໄຟຟ້າ ຂອງ ສປປ ລາວ.

TRIS Rating ຍັງຄົງຈັດລະດັບຄວາມໜ້າເຊື່ອຖື ສະເພາະບໍລິສັດ ຂອງ ຜ-ຟຟລ (Stand-alone credit profile ຫຼື SACP) ຢູ່ທີ່ລະດັບ “bb+” ຈາກເດີມ “bb”. ການປັບເພີ່ມໃນຄັ້ງນີ້ ສະທ້ອນໃຫ້ເຫັນການຟື້ນຕົວຢ່າງແຂງແກ່ນຂອງຄວາມສ່ຽງທາງການເງິນຂອງ ຜ-ຟຟລ ເຊິ່ງເປັນຜົນມາຈາກການປັບອັດຕາຄ່າໄຟຟ້າລະຫວ່າງ ຟຟລ ແລະ ຜ-ຟຟລ ເພີ່ມຂຶ້ນເປັນສອງເທົ່າ ຄວບຄູ່ກັບການປັບປ່ຽນໂຄງສ້າງອັດຕາຄ່າໄຟຟ້າໃຫ້ສອດຄ່ອງກັບສະກຸນເງິນໂດລາສະຫະລັດ (USD-linked Tariff). ພ້ອມກັນນັ້ນ, SACP ຍັງສືບຕໍ່ພິຈາລະນາເຖິງຖານະທາງການຕະຫຼາດທີ່ເຂັ້ມແຂງຂອງ ຜ-ຟຟລ ໃນຂະແໜງອຸດສາຫະກຳຜະລິດພະລັງງານໄຟຟ້າຂອງ ສປປ ລາວ, ປະຫວັດຜົນການດຳເນີນທຸລະກິດທີ່ໜ້າເພິ່ງພໍໃຈ ແລະ ກຸ່ມໂຄງການຜະລິດໄຟຟ້າທີ່ມີການກະຈາຍຄວາມສ່ຽງໄດ້ເປັນຢ່າງດີ. ເຖິງຢ່າງໃດກໍຕາມ, ລະດັບຄວາມໜ້າເຊື່ອຖື ສະເພາະບໍລິສັດຂອງ ຜ-ຟຟລ ຍັງຄົງຖືກຈຳກັດດ້ວຍສະພາບຄ່ອງ ເຊິ່ງເກີດມາຈາກການຄົບກຳນົດຊຳລະຂອງຮຸ້ນກູ້ ແລະ ການມີຂໍ້ຈຳກັດໃນການເຂົ້າເຖິງຕະຫຼາດທຶນ ລວມເຖິງ ຄວາມສ່ຽງດ້ານກະແສເງິນສົດເຊິ່ງເກີດຈາກຄວາມບໍ່ແນ່ນອນໃນການຊຳລະເງິນຂອງ ຟຟລ.

ປັດໄຈສຳຄັນທີ່ກຳນົດລະດັບຄວາມໜ້າເຊື່ອຖື

ລະດັບຄວາມໜ້າເຊື່ອຖື ແມ່ນເຊື່ອມໂຍງກັບ ລະດັບຄວາມໜ້າເຊື່ອຖືຂອງ ຟຟລ ແລະ ຂອງປະເທດ ສປປ ລາວ.

ລະດັບຄວາມໜ້າເຊື່ອຖືຂອງ ຜ-ຟຟລ ເຊື່ອມໂຍງກັບ ລະດັບຄວາມໜ້າເຊື່ອຖືຂອງ ຟຟລ ແລະ ສປປ ລາວ. ຟຟລ ເປັນ ລັດວິສາຫະກິດ ໂດຍມີກະຊວງການເງິນຂອງ ສປປ ລາວ ເປັນເຈົ້າຂອງທັງໝົດ ໂດຍມີການຄຸ້ມຄອງຂອງລັດຖະບານ ສປປ ລາວ. ຟຟລ ມີບົດບາດສຳຄັນໃນການດຳເນີນນະໂຍບາຍດ້ານພະລັງງານຂອງ ລັດຖະບານ ແລະ ເປັນເຈົ້າຂອງຫລັກຂອງໂຄງການໄຟຟ້າ ລວມເຖິງ ລະບົບສາຍສົ່ງ ແລະ ລະບົບຈຳໜ່າຍໄຟຟ້າຂອງປະເທດ. ດັ່ງນັ້ນ, TRIS Rating ເຊື່ອວ່າມີຄວາມເປັນໄປໄດ້ສູງ ທີ່

ຟຟລ ຈະໄດ້ຮັບການສະໜັບສະໜູນຢ່າງເຕັມທີ່ຈາກລັດຖະບານ ກໍລະນີພົບກັບພາວະຫຍຸ້ງຍາກ. ດ້ວຍເຫດນີ້, ລະດັບຄວາມໜ້າເຊື່ອຖື ຟຟລ ຈຶ່ງສະທ້ອນເຖິງການປ່ຽນແປງໄປໃນທິດທາງດຽວກັນກັບລະດັບຄວາມໜ້າເຊື່ອຖື ຂອງ ສປປ ລາວ.

ນັບຕັ້ງແຕ່ການສ້າງຕັ້ງບໍລິສັດ ຜ-ຟຟລ ໄດ້ເຂົ້າມາມີບົດບາດໃນການຜະລິດພະລັງງານໄຟຟ້າຂອງປະເທດ ຕ່ຳຈາກ ຟຟລ ເນື່ອງຈາກ ຟຟລ ຖືຮຸ້ນໃນ ຜ-ຟຟລ 76.6% ແລະ ຍັງຄົງເປັນລູກຄ້າລາຍດຽວຂອງ ຜ-ຟຟລ ແລະ ເປັນເຈົ້າຂອງລະບົບສາຍສົ່ງໄຟຟ້າຂອງປະເທດແຕ່ພຽງຜູ້ດຽວ ເຊິ່ງສະທ້ອນເຖິງຄວາມເຊື່ອມໂຍງຢ່າງສະໜິດແໜ້ນລະຫວ່າງທັງສອງອົງກອນ.

ຟຟລ ມີບົດບາດສຳຄັນໃນການກຳນົດກົນລະຍຸດຕໍ່ທິດທາງການດຳເນີນທຸລະກິດຂອງ ຜ-ຟຟລ ໃນຫຼາຍດ້ານ ລວມເຖິງໂອກາດໃນການເຕີບໃຫຍ່ຂະຫຍາຍຕົວຂອງສັນຍາຊື້-ຂາຍໄຟຟ້າໃນອະນາຄົດ ແລະ ນະໂຍບາຍການຈ່າຍເງິນປັນຜົນ. ນອກຈາກນີ້, ຟຟລ ແລະ ຜ-ຟຟລ ຍັງມີບົດບາດສຳຄັນຕໍ່ແຜນພັດທະນາລະບົບໄຟຟ້າຂອງ ສປປ ລາວ ທີ່ເປັນສ່ວນສຳຄັນຂອງແຜນຍຸດທະສາດຂອງປະເທດ ໃນການພັດທະນາລະບົບເສດຖະກິດ-ສັງຄົມຂອງ ສປປ ລາວ. ພ້ອມນີ້, TRIS Rating ຄາດວ່າ ຜ-ຟຟລ ຈະໄດ້ຮັບການສະໜັບສະໜູນຈາກລັດຖະບານຢ່າງທ່ວງທັນໃນກໍລະນີ ຜ-ຟຟລ ພົບບັນຫາທາງການເງິນ ເນື່ອງຈາກ ຜ-ຟຟລ ມີຄວາມສຳຄັນທາງຍຸດທະສາດຂອງ ຕ່ຳ ຟຟລ.

ການປັບປຸງໂຄງສ້າງລາຄາໄຟຟ້າເຮັດໃຫ້ມີຜົນກຳໄລດີຂຶ້ນ ພ້ອມທັງສອດຄ່ອງກັບສະກຸນເງິນ

ຜົນການດຳເນີນງານຂອງ ຜ-ຟຟລ ດີຂຶ້ນໃນປີ 2025 ໂດຍສ່ວນໃຫຍ່ເປັນຜົນມາຈາກການປັບອັດຕາຄ່າໄຟຟ້າກັບ ຟຟລ ໂດຍເພີ່ມຂຶ້ນເປັນຈຳນວນຫຼາຍ ເປັນ 4.7 Cent ຕ່ຳ Kwh ຈາກເດີມ 2.4 Cent ຕ່ຳ Kwh ໃນໄລຍະປີ 2025 ຜ່ານມາ ປະລິມານການຈຳໜ່າຍໄຟຟ້າເພີ່ມຂຶ້ນ 19% ຖ້າທຽບກັບປີທີ່ຜ່ານມາ 2,996 GWh ຈາກຜົນການດຳເນີນງານຂອງໄຟຟ້າພະລັງງານນ້ຳ. ນອກຈາກນີ້, ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນຍັງເພີ່ມຂຶ້ນພາຍຫຼັງໄດ້ຮັບເງິນປັນຜົນຈາກໂຄງການເທີນ-ຫີນບູນ ໄດ້ມີການຊຳລະຄືນເງິນກູ້ໂຄງການໝົດແລ້ວ ສົ່ງຜົນໃຫ້ລາຍຮັບເງິນປັນຜົນໃນໂຄງການຜູ້ຜະລິດໄຟຟ້າເອກະລາດ (IPP) ເພີ່ມຂຶ້ນເປັນ 1.66 ພັນຕື້ກີບ ຫຼື 62.5% ເມື່ອທຽບກັບປີກ່ອນ ໂດຍປັດໃຈຫຼັກ ສົ່ງຜົນໃຫ້ EBITDA ເພີ່ມຂຶ້ນເປັນ 2 ເທົ່າ ສະເລ່ຍ 3.66 ພັນຕື້ກີບ. ໃນປີ 2025 ເພີ່ມຂຶ້ນ 94.2% ຖ້າທຽບກັບປີກ່ອນ.

ການປ່ຽນໂຄງສ້າງຄ່າໄຟຟ້າມາເປັນ USD-Linked Tariff ຊ່ວຍລົດຄວາມສ່ຽງຈາກການບໍ່ສອດຄ່ອງດ້ານສະກຸນເງິນກ່ອນໜ້ານີ້ ບໍລິສັດມີລາຍຮັບສ່ວນຫຼາຍແມ່ນສະກຸນເງິນກີບ ໃນຂະນະທີ່ໜັ້ນທະໜີ້ສິນເປັນສະກຸນເງິນໂດລາສະຫະລັດ ແລະ ສະກຸນເງິນບາດ ສິ່ງຜົນກະທົບໃຫ້ກະແສເງິນສົດມີການອ່ອນຄ່າຂອງສະກຸນເງິນກີບຢ່າງຮຸນແຮງ ໂຄງສ້າງອັດຕາຄ່າໄຟຟ້າທີ່ໄດ້ມີການປັບປຸງໃໝ່ນີ້ແມ່ນຊ່ວຍໃຫ້ມີການສອດຄ່ອງກັນລະຫວ່າງລາຍຮັບກັບໜີ້ສິນທີ່ເປັນເງິນຕາຕ່າງປະເທດ ແລະ ເຮັດໜ້າທີ່ເປັນກົນໄກປ້ອງກັນຄວາມສ່ຽງຕໍ່ການອ່ອນຄ່າຂອງເງິນກີບໄດ້ຢ່າງມີປະສິດທິພາບ.

TRIS Rating ຄາດວ່າປະລິມານການຂາຍໄຟຟ້າ ຂອງ ຜ-ຟຟລ ຢູ່ລະດັບສະເລ່ຍ 2,600 Gwh ຕໍ່ປີ ເຊິ່ງສອດຄ່ອງກັບຄ່າສະເລ່ຍກັບປີຜ່ານມາ TRIS Rating ເຫັນວ່າການປັບຄ່າອັດຕາໄຟຟ້າຄັ້ງນີ້ເປັນຈຸດປ່ຽນໂຄງສ້າງທີ່ສຳຄັນຕໍ່ກັບການຊຳລະໜີ້ຂອງ ຜ-ຟຟລ ເນື່ອງຈາກຈະຊ່ວຍຍົກລະດັບ (EBITDA) ຂອງບໍລິສັດໃຫ້ສູງຂຶ້ນ. ນອກຈາກນີ້ TRIS Rating ຍັງສົມມຸດຖານວ່າຖ້າການປັບອັດຕາຄ່າໄຟຟ້າຂຶ້ນ 1% ຕໍ່ປີເພື່ອທີ່ຈະຮອດເປົ້າໝາຍທີ່ 5.0 Cent ຕ່ຳ Kwh ໂດຍຄາດການວ່າ EBITDA ຈະຄົງຕົວຢູ່ປະມານ 3.7 - 4.2 ພັນຕື້ກີບໃນປີ 2026-2028.

ອັດຕາສ່ວນໂຄງສ້າງໜີ້ສິນປັບໂຕດີຂຶ້ນ

ສັດສ່ວນພາລະໜີ້ສິນຂອງ ຜ-ຟຟລ ມີການປັບໂຕດີຂຶ້ນຢ່າງເຫັນໄດ້ຊັດໃນປີ 2025, ໂດຍອັດຕາສ່ວນໜີ້ສິນ ຕ່ EBITDA ຫລຸດລົງຢ່າງຫຼວງຫລາຍ ມາຢູ່ທີ່ 3.9 ເທົ່າ ຈາກ 8.1 ເທົ່າ ໃນປີ 2024. ການປັບໂຕດີຂຶ້ນດັ່ງກ່າວ ເປັນຜົນມາຈາກ BITDA ທີ່ເພີ່ມຂຶ້ນ ປະກອບກັບການຈັດການໜີ້ສິນແບບຕັ້ງໜ້າ, ລວມເຖິງການຂາຍຮຸ້ນ 15% ທີ່ຖືຄອງໃນໂຄງການເຂື່ອນໄຟຟ້ານ້ຳເທີນ 1 ແລະ ບໍລິສັດ ອີແອນດີ ເອັນຈີເນຍຣິງ ແອນ ເຊີວິດ ຈຳກັດ ໃນເດືອນ ກັນຍາ 2025 ເຊິ່ງມີມູນຄ່າລວມ 97 ລ້ານໂດລາສະຫະລັດ. ໃນຈຳນວນດັ່ງກ່າວ, ເງິນປະມານ 48.5 ລ້ານໂດລາສະຫະລັດ ແມ່ນໄດ້ຮັບໃນປີ 2025 ແລະ ໄດ້ຖືກນຳໃຊ້ເຂົ້າໃນການຊຳລະຄືນຮຸ້ນກູ້ ເປັນຫຼັກ

TRIS Rating ຄາດວ່າທ່າອ່ຽງການຫຼຸດຜ່ອນໜີ້ສິນນີ້ ຈະຍັງສືບຕໍ່ດຳເນີນໄປ, ໂດຍໄດ້ຮັບການສະໜັບສະໜູນຈາກການບໍລິຫານກະແສເງິນສົດຢ່າງມີວິໄນ ແລະ ການໃຊ້ຈ່າຍລົງທຶນທີ່ຈຳກັດ, ເຊິ່ງເຮັດໃຫ້ສາມາດນຳໃຊ້ເງິນຈາກການດຳເນີນງານ

(FFO) ໃນສັດສ່ວນທີ່ຫຼາຍກວ່າເກົ່າເຂົ້າໃນການຫຼຸດຜ່ອນໜີ້ສິນ ເຊິ່ງຄາດການວ່າ ອັດຕາສ່ວນໜີ້ສິນ ຕໍ່ EBITDA ຈະຫຼຸດລົງຕ່ຳກວ່າ 3 ເທົ່າ ໃນໄລຍະ 3 ປີຕໍ່ໜ້າ, ໂດຍທີ່ອັດຕາສ່ວນ FFO ຕໍ່ ໜີ້ສິນ ຈະຍັງຄົງຮັກສາໄວ້ໃນລະດັບສູງກວ່າ 30%.

ລາຍຮັບຍັງຄົງເຊື່ອມໂຍງກັບຄວາມບໍ່ແນ່ນອນໃນການຊຳລະເງິນຈາກ ຟຟລ

ເຖິງແມ່ນວ່າຈະມີການປັບປຸງລາຍຮັບໃນທາງໂຄງສ້າງດີຂຶ້ນກໍຕາມ, ແຕ່ຄວາມສາມາດໃນການສ້າງກະແສເງິນສົດຂອງ ຜ-ຟຟລ ຍັງຖືກຈຳກັດຈາກຄວາມສາມາດໃນການຊຳລະຄ່າເງິນຂອງ ຟຟລ ເຊິ່ງຍັງບໍ່ມີຄວາມແນ່ນອນ ແລະ ສ້າງຂໍ້ຈຳກັດໃນການປ່ຽນແປງ EBITDA ໃຫ້ກາຍເປັນກະແສເງິນສົດຮັບເຂົ້າຕົວຈິງ. ໃນປີ 2025 ໜີ້ຕ້ອງຮັບຈາກ ຟຟລ ເພີ່ມຂຶ້ນເປັນ 1.37 ພັນຕື້ກີບ ຈາກ 0.31 ພັນຕື້ກີບໃນປີ 2024 ເຊິ່ງສະທ້ອນໃຫ້ເຫັນເຖິງຄວາມລ່າຊ້າໃນການຊຳລະເງິນ. ໂດຍລະຫວ່າງປີ ຟຟລ ໄດ້ຊຳລະເງິນຄ່າໄຟຟ້າພຽງແຕ່ປະມານ 56% ຂອງວົງເງິນທັງໝົດ. TRIS Rating ຄາດຄະເນວ່າ EBITDA ຈາກກະແສໄຟຟ້າທີ່ ຜ-ຟຟລ ເປັນເຈົ້າຂອງ 100% ເຊິ່ງກວມເອົາປະມານ 60% ຂອງ EBITDA ທັງໝົດ ຍັງມີຄວາມສ່ຽງຕໍ່ຄວາມບໍ່ແນ່ນອນຂອງຄວາມສາມາດໃນການຊຳລະເງິນຄ່າໄຟຟ້າຂອງ ຟຟລ.

ການປະເມີນຄວາມສາມາດໃນການຊຳລະເງິນຂອງ ຟຟລ ຍັງມີຄວາມບໍ່ແນ່ນອນ ເນື່ອງຈາກການເປີດເຜີຍຂໍ້ມູນທີ່ຈຳກັດກ່ຽວກັບພັນທະໜີ້ສິນ ແລະ ຄວາມສາມາດໃນການສ້າງກຳໄລທີ່ຈຳກັດ. ເຖິງຢ່າງໃດກໍ່ຕາມ TRIS Rating ຄາດວ່າ ສະຖານະທາງການເງິນຂອງ ຟຟລ ຈະຄ່ອຍປັບປຸງດີຂຶ້ນ ໂດຍໄດ້ຮັບການສະໜັບສະໜູນຈາກການປັບອັດຕາຄ່າໄຟຟ້າໃນປະເທດ ເຊິ່ງຈະຊ່ວຍເພີ່ມສ່ວນຕ່າງລະຫວ່າງລາຍຮັບກັບຕົ້ນທຶນໃນການຈັດຫາພະລັງງານໄຟຟ້າ. TRIS Rating ຍັງຄາດວ່າ ຟຟລ ຈະໃຫ້ຄວາມສຳຄັນເປັນອັນດັບຕົ້ນໆ ໃນການຊຳລະຄ່າໄຟຟ້າໃຫ້ແກ່ ຜ-ຟຟລ ເພື່ອຫຼີກລ້ຽງຄວາມສ່ຽງທີ່ຈະເກີດການຜິດນັດຊຳລະຮຸ້ນກູ້. ການທີ່ ຟຟລ ມີຄວາມຕັ້ງໃຈຈະ ຊຳລະຄ່າໄຟຟ້າຢ່າງໜ້ອຍປະມານ 106 ລ້ານໂດລາສະຫະລັດ ໃນປີ 2026 ຫຼືສະເລ່ຍປະມານ 80% ຂອງຍອດໜີ້ທັງໝົດ ສະທ້ອນໃຫ້ເຫັນເຖິງຄວາມຕັ້ງໃຈທີ່ຈະປັບປຸງຄວາມທັນເວລາໃນການຊຳລະເງິນ ແລະ ເພື່ອສະໜັບສະໜູນການຊຳລະຮຸ້ນກູ້ຂອງ ຜ-ຟຟລ ໃນໄລຍະອັນໃກ້ນີ້.

ສະພາບຄ່ອງທາງການເງິນໃນການຊຳລະຄືນຮຸ້ນກູ້ທີ່ຈະຄົບກຳນົດ.

ຄວາມກົດດັນດ້ານສະພາບຄ່ອງຈາກການຄົບກຳນົດຊຳລະຮຸ້ນກູ້ ທີ່ມີມູນຄ່າສູງ, ປະກອບກັບການເຂົ້າເຖິງຕະຫຼາດທຶນທີ່ມີຄວາມຈຳກັດ ຍັງຄົງເປັນຂໍ້ຈຳກັດຕໍ່ອັນດັບຄວາມໜ້າເຊື່ອຖືຂອງ ຜ-ຟຟລ ຢ່າງຕໍ່ເນື່ອງ.

ຜ-ຟຟລ ມີຮຸ້ນກູ້ທີ່ຈະຄົບກຳນົດຊຳລະ ຈຳນວນປະມານ 5.6 ຕື້ບາດ (3.8 ພັນຕື້ກີບ) ໃນລະຫວ່າງເດືອນ ສິງຫາ ຫາ ກັນຍາ 2026 ແລະ ອີກຈຳນວນ 4.1 ຕື້ບາດ (2.8 ພັນຕື້ກີບ) ໃນເດືອນ ມັງກອນ 2027. ການຄົບກຳນົດຊຳລະດັ່ງກ່າວ ຄາດວ່າຈະສົ່ງຜົນໃຫ້ເກີດການຂາດສະພາບຄ່ອງ ແລະ ອາດມີຄວາມຈຳເປັນຕ້ອງໄດ້ຮັບການສະໜັບສະໜູນຈາກ ກະຊວງການເງິນ ແລະ ທະນາຄານພາຍໃນປະເທດ ເພື່ອຮັບປະກັນການຊຳລະຄືນໃຫ້ທັນເວລາ.

ຜ-ຟຟລ ມີແຜນທີ່ຈະອອກຮຸ້ນກູ້ໃນຕະຫຼາດສາກົນ ມູນຄ່າປະມານ 300 ລ້ານ ໂດລາສະຫະລັດ ເພື່ອນຳມາໃຊ້ໃນການຊຳລະຄືນໜີ້ຮຸ້ນກູ້ທີ່ຈະຄົບກຳນົດ ໂດຍມີເປົ້າໝາຍທີ່ຈະ ອອກຈຳໜ່າຍ ໃນໄຕມາດ 3 ປີ 2026. ເຖິງແມ່ນວ່າ ການອອກຮຸ້ນກູ້ຈະມີຕົ້ນທຶນດອກເບ້ຍທີ່ສູງ ແຕ່ຖ້າຫາກປະສົບຜົນສຳເລັດ ຈະຊ່ວຍຫຼຸດແຮງກົດດັນທາງດ້ານສະພາບຄ່ອງ ແລະ ຫຼຸດຜ່ອນຄວາມສ່ຽງໃນການຊຳລະໜີ້ຮຸ້ນກູ້ທີ່ຈະຄົບກຳນົດ.

ໂຄງສ້າງໜີ້ສິນ

ໃນທ້າຍເດືອນທັນວາ ປີ 2025 ຜ-ຟຟລ ມີພາລະໜີ້ສິນທັງໝົດ 14.7 ພັນຕື້ກີບ ໂດຍບໍ່ມີສັດສ່ວນຂອງໜີ້ສິນບູລິມະສິດ ໃນການຊຳລະຄືນກ່ອນ.

ສົມມຸດຖານໃນກໍລະນີພື້ນຖານ

ສົມມຸດຖານທີ່ສຳຄັນໃນການຄາດການກໍລະນີພື້ນຖານຂອງ TRIS Rating ສຳລັບການດຳເນີນງານຂອງ ຜ-ຟຟລ ໃນໄລຍະປີ 2026-2028

- ຍອດຂາຍກະແສໄຟຟ້າທີ່ບໍລິສັດເປັນເຈົ້າຂອງເອງທັງໝົດ ປະມານ 2,600 GWh ຕໍ່ປີ
- ລາຍຮັບຈາກການຂາຍກະແສໄຟຟ້າ ຢູ່ທີ່ປະມານ 2.7 ພັນຕື້ກີບ ໃນປີ 2026, ແລະ ເພີ່ມຂຶ້ນເປັນ 3.1 ພັນຕື້ກີບຕໍ່ປີ ໃນໄລຍະປີ 2028
- ອັດຕາກຳໄລຈາກການດຳເນີນງານ ຢູ່ທີ່ປະມານ 79%-81%

- ລາຍຮັບເງິນປັນຜົນຈາກໂຄງການຜູ້ຜະລິດໄຟຟ້າເອກະລາດ (IPPs) ຢູ່ລະຫວ່າງ 1.4 – 1.7 ພັນຕື້ກີບ ຕໍ່ປີ
- ງົບປະມານເງິນລົງທຶນ ຈະຢູ່ທີ່ປະມານ 0.1 ພັນຕື້ກີບ ຕໍ່ປີ.
- ຈ່າຍເງິນປັນຜົນ ຈຳນວນປະມານ 50 ຕື້ກີບຕໍ່ປີ

ແນວໂນ້ມລະດັບຄວາມໜ້າເຊື່ອຖື

ແນວໂນ້ມລະດັບຄວາມໜ້າເຊື່ອຖື “Stable” ຫຼື “ຄົງທີ່” ສະທ້ອນເຖິງແນວໂນ້ມລະດັບຄວາມໜ້າເຊື່ອຖືຂອງ ຟຟລ ແລະ ຂອງ ປະເທດ ສປປ ລາວ ໂດຍ TRIS Rating ຄາດວ່າ ລະດັບຂອງຄວາມສຳພັນ ລະຫວ່າງ ຟຟລ ແລະ ຜ-ຟຟລ ຍັງຈະບໍ່ປ່ຽນແປງ ໄປຈາກປັດຈຸບັນ. ພ້ອມນີ້, ຟຟລ ຈະຍັງຄົງຖືຄອງຮຸ້ນ ເປັນຂາຮຸ້ນສ່ວນໃຫຍ່ຂອງ ຜ-ຟຟລ. ນອກຈາກນີ້, ແນວໂນ້ມດັ່ງກ່າວ ຍັງ ສະທ້ອນເຖິງຄວາມຄາດຫວັງວ່າ ຟຟລ ແລະ ຜ-ຟຟລ ຈະຍັງຄົງໄດ້ຮັບການສະໜັບສະໜູນຢ່າງເຕັມທີ່ ແລະ ທັນເວລາ ຈາກ ລັດຖະບານ ສປປ ລາວ.

ປັດໄຈທີ່ອາດເຮັດໃຫ້ລະດັບຄວາມໜ້າເຊື່ອຖືປ່ຽນແປງ

ລະດັບຄວາມໜ້າເຊື່ອຖື ແລະ ແນວໂນ້ມ ຂອງ ຜ-ຟຟລ ແມ່ນຈະເປັນໄປຕາມ ລະດັບຄວາມໜ້າເຊື່ອຖື ແລະ ແນວໂນ້ມຄວາມ ໜ້າເຊື່ອຖືຂອງ ຟຟລ ແລະ ຂອງປະເທດ ສປປ ລາວ. TRIS Rating ອາດຈະພິຈາລະນາ ການປັບເພີ່ມ ລະດັບຄວາມໜ້າເຊື່ອຖື ສະເພາະບໍລິສັດຂອງ ຜ-ຟຟລ (SACP) ຂຶ້ນ ຫາກສະຖານະດ້ານສະພາບຄ່ອງຂອງ ຜ-ຟຟລ ໄດ້ຮັບການປັບປຸງດີຂຶ້ນ. ສິ່ງນີ້ອາດ ເກີດຂຶ້ນໄດ້ຈາກການຊຳລະເງິນຄ່າກະແສໄຟຟ້າຈາກ ຟຟລ ຫຼາຍຂຶ້ນ ແລະ ຕົງຕາມເວລາ ຄວບຄູ່ກັບການຟື້ນຟູຄວາມສາມາດໃນ ການເຂົ້າຫາຕະຫຼາດທຶນໄດ້ອີກຄັ້ງ, ປັດໄຈດັ່ງກ່າວຈະຊ່ວຍໃຫ້ເພີ່ມສະພາບຄ່ອງທາງການເງິນ ແລະ ຫຼຸດຄວາມສ່ຽງການຊຳລະຄືນ ໜີ້ຮຸ້ນກູ້ທີ່ຈະຄົບກຳນົດໄດ້.
ໃນທາງກົງກັນຂ້າມ TRIS Rating ອາດຈະປັບຫລຸດລະດັບຄວາມໜ້າເຊື່ອຖືສະເພາະບໍລິສັດ ຜ-ຟຟລ ລົງ ຖ້າຫາກສະຖານະ ທາງການເງິນ ຜ-ຟຟລ ອ່ອນແອລົງ. ນອກຈາກນີ້, ສະພາບຄ່ອງທີ່ຍັງເຄັ່ງຮ້ອນຫລາຍຂຶ້ນ ເນື່ອງມາຈາກປັດໄຈຕ່າງໆ ເຊັ່ນ ການສະ ໜັບສະໜູນ ຈາກກະຊວງການເງິນ ລ່າຊ້າ ກໍ່ອາດນຳໄປສູ່ການປັບຫລຸດລະດັບຄວາມໜ້າເຊື່ອຖືລົງໄດ້ເຊັ່ນກັນ

ພາບລວມຂອງບໍລິສັດ

ຜ-ຟຟລ ຖືກສ້າງຕັ້ງຂຶ້ນໃນປີ 2010 ແລະ ຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວ ໃນປີ 2011. ການສ້າງຕັ້ງຂອງ ຜ-ຟຟລ ແມ່ນ ສ່ວນໜຶ່ງຂອງການປັບໂຄງສ້າງຂະແໜງພະລັງງານໄຟຟ້າຂອງ ສປປ ລາວ ໂດຍໃຫ້ ຜ-ຟຟລ ລົງທຶນຊື້ເອົາຊັບສິນ ຜະລິດໄຟຟ້າໃນ ປັດຈຸບັນແລະອະນາຄົດຈາກ ຟຟລ. ກ່ອນການສ້າງຕັ້ງ ຜ-ຟຟລ, ຟຟລ ເປັນວິສາຫະກິດ ທີ່ຮັບຜິດຊອບລວມ ໃນທຸກພາກສ່ວນ ຂອງຂະແໜງພະລັງງານໄຟຟ້າ ນັບແຕ່ການຜະລິດ, ການພັດທະນາລະບົບສາຍສົ່ງ ຈົນເຖິງການຈຳໜ່າຍ ກະແສໄຟຟ້າໃຫ້ແກ່ຜູ້ ຊົມໃຊ້. ຟຟລ ຍັງເປັນເຈົ້າຂອງຮຸ້ນ ໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ຫຼາຍໂຄງການ ທີ່ດຳເນີນການຜະລິດໃນ ສປປ ລາວ. ເຖິງແມ່ນວ່າຈະມີການໂອນຊັບສິນຜະລິດໄຟຟ້າໃຫ້ແກ່ ຜ-ຟຟລ, ຟຟລ ຍັງຄົງເປັນຜູ້ຮັບຊື້ ໄຟຟ້າພຽງລາຍດຽວໃນ ສປປ ລາວ ແລະ ເປັນຜູ້ຈຳໜ່າຍຫລັກ. ຟຟລ ເປັນເຈົ້າຂອງລະບົບສາຍສົ່ງ ແລະ ຈຳໜ່າຍກະແສໄຟຟ້າ ເກືອບທັງໝົດໃນ ສປປ ລາວ.

ໃນເດືອນກຸມພາ 2026, ຟຟລ ຖືຮຸ້ນ 76.6% ໃນ ຜ-ຟຟລ ແລະ 10% ໂດຍຣາຊກຣຸບ (RATCH Group). ຜ-ຟຟລ ເປັນເຈົ້າ ຂອງ ແລະ ຄຸ້ມຄອງບໍລິຫານ ຊັບສິນຜະລິດໄຟຟ້າພະລັງງານນ້ຳ ທີ່ໄດ້ຖືກພັດທະນາໂດຍ ຟຟລ. ນອກຈາກນີ້, ຜ-ຟຟລ ຍັງລົງທຶນ ຖືຮຸ້ນ ໃນບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດ (IPP) ທີ່ເຄີຍຖືຮຸ້ນໂດຍ ຟຟລ ໃນເມື່ອກ່ອນ. ຊັບສິນຜະລິດໄຟຟ້າແຕ່ລະ ໂຄງການ ຂອງ ຜ-ຟຟລ ແມ່ນມີສັນຍາຊື້ຂາຍໄຟຟ້າ ແລະ ສັນຍາສຳປະທານເປັນໄລຍະ 30 ປີ.

ໃນເດືອນທັນວາ 2025, ກຳລັງຕິດຕັ້ງຂອງ ຜ-ຟຟລ ທີ່ດຳເນີນການແລ້ວ ຕາມສັດສ່ວນຖືຮຸ້ນ ມີ 1,657 MW, ເຊິ່ງປະກອບມາ ຈາກ 637 MW ຈາກ 10 ໂຄງການໄຟຟ້າພະລັງງານນ້ຳທີ່ເປັນເຈົ້າຂອງທັງໝົດ, ແລະ 1,020 MW ຈາກການລົງທຶນຖືຮຸ້ນໃນ 16 ໂຄງການໄຟຟ້າພະລັງງານນ້ຳ.

ຜົນການດຳເນີນງານທີ່ສຳຄັນ *

ຕາຕະລາງທີ 1: ກຳລັງການຕິດຕັ້ງຂອງ EDL-Gen ມາຮອດເດືອນທັນວາ 2025.

ລ/ດ	ຊື່ໂຄງການ	ທີ່ຕັ້ງ	ສັດສ່ວນ %	ກຳລັງຕິດຕັ້ງ MW	COD
ໂຄງການທີ່ ຜ-ຟຟລ ຄຸ້ມຄອງ HPP					
1	ນ້ຳງຶ່ມ 1	ວຽງຈັນ	100	150	1971
2	ນ້ຳເລີກ	ວຽງຈັນ	100	60	2000
3	ນ້ຳມັງ 3	ວຽງຈັນ	100	40	2005
4	ເຊເສັດ 1	ສາລະວັນ	100	45	1991
5	ເຊເສັດ 2	ສາລະວັນ	100	86	2009
6	ເຊລະບໍ	ຈຳປາສັກ	100	13	1969
7	ນ້ຳຊອງ	ວຽງຈັນ	100	6	2012
8	ນ້ຳສະນາ	ວຽງຈັນ	100	14	2014
9	ຫ້ວຍລຳພັນໃຫຍ່	ເຊກອງ	100	88	2015
10	ນ້ຳຄານ 2	ຫຼວງພະບາງ	100	130	2015
	ທັງໝົດ			**637**	
ໂຄງການທີ່ ຜ-ຟຟລ ເຂົ້າຖືຮຸ້ນ IPPs					
1	ເທີນຫິນບຸນ	ບໍລິຄຳໄຊ	60	312	1998/2013
2	ນ້ຳງຶ່ມ 2	ວຽງຈັນ	25	153.8	2012
3	ຫ້ວຍເຫາະ	ອັດຕະປື	20	30.4	1998
4	ນ້ຳລີກ 1-2	ວຽງຈັນ	10	10	2010
5	ນ້ຳງຶ່ມ 5	ວຽງຈັນ	15	18	2012
6	ນ້ຳລອງ	ຫຼວງນ້ຳທາ	20	1	2013
7	ນ້ຳແບ່ງ	ອຸດົມໄຊ	10	3.6	2016
8	ນ້ຳອູ 2	ຫຼວງພະບາງ	15	18	2017
9	ນ້ຳອູ 5	ຜົ້ງສາລີ	15	36	2017
10	ນ້ຳອູ 6	ຜົ້ງສາລີ	15	27	2017
11	ນ້ຳມັງ 1	ບໍລິຄຳໄຊ	10	6.4	2017
12	ໄຊຍະບູລີ	ໄຊຍະບູລີ	20	257	2019
13	ນ້ຳລີກ 1	ວຽງຈັນ	10	6.47	2019
14	ນ້ຳທາ 1	ບໍ່ແກ້ວ	20	33.6	2019
15	ຫ້ວຍລຳພັນຕອນລຸ່ມ	ເຊກອງ	60	9	2021
16	ນ້ຳເທີນ 1	ບໍລິຄຳໄຊ	15	97.5	2022
	ທັງໝົດ			1,019.7	
	ລວມທັງໝົດ			**1,656.7**	

ตาตะลางที 2: ติอຊี้อัดภามดำเนิมงามຫຼັภ 2025

ติอຊี้อัด	ห้อหม่อย	2021	2022	2023	2024	2025
พะลังงามไฟฟ้าขายติอจิง	GWh	2,299	2,795	2,945	2,517	2,996
อัดตาถ่าไฟสะเล่ย	ภิบ/kWh	520	451	479	484	777
ลายธับจาภาขายภะแสไฟทั้งหมัด	ติ้ภิบ	1,197	1,267	1,410	1,219	2,327
ลายธับจาภาเงิมปันผิม IPPs	ติ้ภิบ	475	468	455	1,019	1,656

ข้ำมูมภามเงิม ແละ อัดตาส่อมหางภามเงิมที่สำคัม *

ห้อหม่อย: ล้ามภิบ

---------- ติอเลภาห้ายปี วัมที 31 ทัมอา ----------					
	2025	**2024**	**2023**	**2022**	**2021**
ลายธับลอมจาภามดำเนิมงาม	2,483,489	1,362,250	1,496,622	1,355,843	1,235,936
ภำไลก่อมลายจ่ายดอภเบ้ยและอาภอม (EBIT)	2,962,897	1,957,838	1,848,722	1,963,575	1,473,950
ภำไลก่อมลายจ่าย ดอภเบ้ย, อาภอม, ถ่าหลุ้ยห้ำม และ ถ่าเสื่อม (EBITDA)	3,658,694	1,883,741	1,596,360	1,533,523	1,509,164
เงิมทึมจาภามดำเนิมงาม (FFO)	2,567,713	595,618	362,018	403,002	652,009
ลายจ่ายดอภเบ้ยที่ปับปุงแล้อ	1,088,717	1,284,996	1,233,223	1,050,074	857,155
ลายจ่ายเงิมลิงทึม	62,300	0	348,638	57,705	87,526
ຊับสิมลอม	40,217,299	29,549,445	32,120,934	29,669,222	26,552,167
หมี้สิมหางภามเงิมที่ปับปุงแล้อ	14,105,266	15,200,602	19,384,518	16,921,382	16,626,897
ส่อมของผู้ถือฮุ้มที่ปับปุงแล้อ	21,734,877	8,717,531	10,432,204	11,585,568	9,230,594
อัดตาส่อมหางภามเงิมที่ปับปุงแล้อ (Adjusted Ratios)					
อัดตา ภำไลก่อมลายจ่ายดอภเบ้ย, อาภอม, ถ่าหลุ้ยห้ำมและถ่าเสื่อม (%)	147.3	138.3	106.7	113.1	122.1
อัดตาส่อมผิมตอบแทมก่อมอาภอม ต่ำเงิมทึม ถาออม (%)	9.7	7.1	6.2	7.2	5.8
อัดตาส่อม ภำไล ก่อมดอภเบ้ย, อาภอม, ถ่าหลุ้ยห้ำมและถ่าเสื่อม ต่ำดอภเบ้ยที่จ่าย (เท่า)	3.4	1.5	1.3	1.5	1.8
อัดตาส่อมหมี้สิมหางภามเงิม ต่ำภำไลก่อมดอภเบ้ย, อาภอม, ถ่าหลุ้ยห้ำมและถ่าเสื่อม (เท่า)	3.9	8.1	12.1	11.0	11.0
อัดตาส่อมเงิมทึมจาภามดำเนิมงามต่ำหมี้สิมหางภามเงิม (%)	18.2	3.9	1.9	2.4	3.9
อัดตาส่อมหมี้สิมหางภามเงิมต่ำโถงส้ำงเงิมทึม (%)	39.4	63.6	65.0	59.4	64.3

* เอาะสามลายงามภามเงิมแบบลอมกิดจะภาม

ເກນການຈັດລະດັບຄວາມໜ້າເຊື່ອຖືທີ່ກ່ຽວຂ້ອງ

- ເກນການຈັດລະດັບຄວາມໜ້າເຊື່ອຖືທຸລະກິດທົ່ວໄປ, 29 ທັນວາ 2025.
- ອັດຕາສ່ວນທາງການເງິນທີ່ສຳຄັນແລະການປັບປຸງຕົວເລກທາງການເງິນ ສຳລັບທຸລະກິດທົ່ວໄປ, 7 ພຶດສະພາ 2025
- ເກນການຈັດລະດັບຄວາມໜ້າເຊື່ອຖືກຸ່ມທຸລະກິດ, 25 ສິງຫາ 2025.
- ເກນການຈັດລະດັບຄວາມໜ້າເຊື່ອຖືຂອງຫລັກຊັບປະເພດໜີ້, 26 ທັນວາ 2024
  ເກນການຈັດລະດັບຄວາມໜ້າເຊື່ອຖືອົງກອນທີ່ກ່ຽວຂ້ອງກັບພາກລັດ, 27 ຕຸລາ 2023

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ)	
ລະດັບຄວາມໜ້າເຊື່ອຖືບໍລິສັດ	BB+

ລະດັບຄວາມໜ້າເຊື່ອຖືຂອງຮຸ້ນກູ້:

EDLGEN268A: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 137.4 ລ້ານບາດ ກຳນົດຊຳລະປີ 2026	BB+
EDLGEN271A: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 972.4 ລ້ານບາດ ກຳນົດຊຳລະປີ 2027	BB+
EDLGEN271B: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 2,489.5 ລ້ານບາດ ກຳນົດຊຳລະປີ 2027	BB+
EDLGEN271C: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 646.3 ລ້ານບາດ ກຳນົດຊຳລະປີ 2027	BB+
EDLGEN27NA: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 303 ລ້ານບາດ ກຳນົດຊຳລະປີ 2027	BB+
EDLGEN287A: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 1,897.9 ລ້ານບາດ ກຳນົດຊຳລະປີ 2028	BB+
EDLGEN307A: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 809.8 ລ້ານບາດ ກຳນົດຊຳລະປີ 2030	BB+
EDLGEN311A: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 1,093.4 ລ້ານບາດ ກຳນົດຊຳລະປີ 2031	BB+
EDLGEN337A: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 1,621.2 ລ້ານບາດ ກຳນົດຊຳລະປີ 2033	BB+
EDLGEN269A: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 166 ລ້ານໂດລາ ສຫລ ກຳນົດຊຳລະປີ 2026	BB+
EDLGEN289A: ຮຸ້ນກູ້ປະເພດບໍ່ດ້ອຍສິດແລະບໍ່ມີຫຼັກປະກັນ ຈຳນວນ 95 ລ້ານໂດລາ ສຫລ ກຳນົດຊຳລະປີ 2028	BB+
ແນວໂນ້ມລະດັບຄວາມໜ້າເຊື່ອຖື:	ຄົງທີ່

ລະດັບຄວາມໜ້າເຊື່ອຖືຂອງບໍລິສັດທີ່ຜ່ານມາ:

ວັນທີທົບທວນຄັ້ງກ່ອນ: 28/05/2025

ວັນທີ	ຜົນການຈັດອັນດັບ	ແນວໂນ້ມ
22/09/23	BB+	ລົບ (Negative)
19/05/23	BBB-	ລົບ (Negative)
20/05/22	BBB-	ຄົງທີ່ (Stable)
14/05/21	BBB-	ລົບ (Negative)
15/05/20	BBB	ລົບ (Negative)
28/06/19	BBB	ຄົງທີ່ (Stable)
12/06/17	BBB+	ລົບ (Negative)
15/10/14	BBB+	ຄົງທີ່ (Stable)

ໝາຍເຫດ:

ສະບັບແປພາສາລາວ ຖືກຈັດກຽມຈາກສະບັບຕົ້ນທີ່ເປັນພາສາອັງກິດ. ກໍລະນີມີການຜິດຕ່ຽງກັນ, ສະບັບພາສາອັງກິດມີສິດເໜືອກວ່າ.